ເພື່ອຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການໃຫ້ແກ່ຊາວ

ກະສິກອນໃນເຂດບ້ານເປົ້າໝາຍຂອງໂຄງການກະສິກຳເພື່ອໂພຊະນາການ




ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.

Phonexay village, Saysettha district, Vientiane Capital,
Lao PDR.

ໂທ: +856 20 416 556

Fax: +856 20 416 556

E-mail : ssfsn.project@gmail.com

ເວັບໄຊ້: www.afn.gov.la


ກະຊວງກະສິກຳ ແລະ ປ່າໄມ້ 14

ປື້ມຄູ່ມືສົ່ງເສີມເຕັກນິກ

# ການຄຸ້ມຄອງເຫັດແດງທຳມະຊາດ



ໂຄງການກະສິກຳ ເພື່ອໂພຊະນາການ

ມັງກອນ, 2019

# ເອກະສານອ້າງອີງ

viloune soydara and sounthone ketphanh,
sounthone53@yahoo.com

ເຄື່ອງປ່າຂອງດົງ 100 ຊະນິດທີ່ສຳຄັນໃນ ສສປ ລາວ 2009

**ຕົວຢ່າງ: ລາຍຮັບຕໍ່ປີຂອງຄອບຄົວຊາວກະສິກອນໃນການເກັບກູ້ເຫັດແດງ**

ລາຍໄດ້ຈາກເຫັດແດງແມ່ນພຽງສ່ວນນ້ອຍໜຶ່ງ ຂອງລາຍໄດ້ທັງໝົດຂອງຄອບຄົວຕໍ່ປີສະເລ່ຍ 60 ກິໂລ/ຄົນ/ປີ ລາຄາສະເລຍ 200,000 ກີບ/ກິໂລ ເສຍພາສີໃຫ້ເມືອງ 500,000 ກີບ/ເຕົາ/ປີ ( ປີທີ່ໄດ້ ຫຼາຍ ) ໃນ ໜຶ່ງປີ ເຫັດເກີດພຽງ ລະດູດຽວ ປະມານ 7 ວັນກໍໝົດລະດູ ຖ້າທຽບໃສ່ເງິນຕໍ່າສຸດຂອງກຳມະກອນ 1,200,000 ກີບ/ເດືອນ ກໍຍັງພໍທີ່ໄດ້ລາຍຮັບດີຢູ່.

## 5. ຂໍ້ແນະນຳໃນການໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດອອກສູ່ວົງກວ້າງ

ທັງໝົດທີ່ກ່າວມານີ້ພາໃຫ້ມີຜົນສຳເລັດ,ມີລາຍຮັບດີ,ຮັ່ງມີບ້ານທີ່ມີປ່າເຫັດແດງກວມ 80% ຂອງເນື້ອທີ່ ຈຶ່ງສາມາດຕັ້ງກຸ່ມໄດ້ປະຊາຊົນ.



ພື້ນທີ ສະພາບແວດລ້ອມທີເໝາະສົມ



# ຂໍ້ແນະນຳ

ປຶ້ມຄູ່ມືນີ້ແມ່ນເຈດຕະນາເຮັດໃຫ້ການນຳໃຊ້ເຄື່ອງມືງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເໜີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງການນຳໃຊ້ປຶ້ມຄູ່ມືກ່ຽວກັບການປັບຕົວທາງດ້ານເຕັກນິກ ການຮັກສາປ່າເພື່ອຜົນຜລິດເຫັດແດງຢູ່ໃນບ້ານເປົ້າ ໝາຍ ໂຄງການ ກະສິກຳເພື່ອ ໂພຊະນາການ ເຂດພາກເໜືອຂອງປະເທດລາວ.

ປຶ້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາ ແລະ ປັບປຸງໃຫ້ແທດເໝາະໃນການຈັດຕັ້ງປະຕິບັດຂອງ ໂຄງການ ກະສິກຳເພື່ອ ໂພຊະນາການ ໂດຍມີການຮ່ວມມືກັບນັກວິຊາການສະເພາະດ້ານ ແລະ ພະນັກງານປະສານຂອງໂຄງການ NAFRI/DTEAP ເພື່ອພັດທະນາມາເປັນເຄື່ອງມືໃຫ້ແກ່ພະນັກງານຂັ້ນແຂວງ. ເມືອງ ສາມາດຖ່າຍທອດໄປເຖິງຕາມຄວາມຕ້ອງການຂອງຊາວກະສິກອນໃນພື້ນທີເປົ້າໝາຍໂຄງການ.

**ຂຽນ ແລະ ຮຽບຮຽງໂດຍ:**

ໄລຄຳ ສີຫານາກ

**ອອກແບບ ແລະ ຈັດໜ້າໂດຍ:**

ອຸໄລທຳ ລາຊະສົມມາ ແລະ ອານົງ ວິໄລວັນ

**ຜູ້ກວດແກ້:**

ວົງວິໄລ ວົງຄຳຊາວ

# ສາລະບານ


| | ໜ້າ |
|---|---|
| ຂໍ້ແນະນຳ | 3 |
| ສາລະບານ | 4 |
| ຄຳນຳ | 5 |
| 1. ຄຸນລັກສະນະທົ່ວໄ | 6 |
| 2. ຜົນປະໂຫຍດທາງໂພສະນາການ ແລະ ການສ້າງລາຍຮັບ | 7 |
| 3. ເຕັກນິກ ແລະ ຂັ້ນຕອນການຄຸ້ມຄອງຈັດສັນ | 8 |
| 4. ການປະເມີນທາງດ້ານການຕະຫຼາດ | 9 |
| 5. ຂໍ້ແນະນຳໃນການນຳໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດອອກສູ່ວົງກ້ວາງ | 10 |
| ເອກະສານອ້າງອີງ | 11 |




## 4. ການປະເມີນທາງດ້ານການຕະຫຼາດ

- ມີຄວາມຕ້ອງການຄອງະຫຼາດສູງເປັນຕົ້ນແມ່ນຕະລາດຈີນການຕະຫຼາດ ແມ່ນມີຄວາມເໝາະສົມສຳລັບທ້ອງຖິ່ນໂດຍລວມແລ້ວມີລາຄາດັ່ງນີ້.
- ປະເພດ ໜຶ່ງລາຄາ 70,000 ກີບ/ ກິໂລ (ເຫັດອອ່ນ).
- ປະເພດ ສອງລາຄາ 10,000-15,000 ກີ/ ກິໂລ (ເຫັດແກ່).
- ອົບແຫ້ງປະເພດ ໜຶ່ງ 600,000-700,000 ກີບ/ກິໂລ ( 4-5 ກິໂລ ເຫັດສົດ) ອົບ 24 ຊົ່ວໂມງ.
- ອົບແຫ້ງປະເພດສອງ 200,000-220,000ກີບ/ກິໂລ (6-7 ກິໂລສົດ ).



ເຫັດກໍ່ແດງອົບແຫ້ງ

## 3. ເຕັກນິກ ແລະ ຂັ້ນຕອນການຄຸ້ມຄອງຈັດສັນ

- ລະບຽບຂອງບ້ານໃນການປົກປັກຮັກສາແຕ່ລະປະເພດປ່າຂອງບ້ານ.
- ປົກປັກຮັກສາປ່າແກ່ເພື່ອເປັນແຫຼ່ງກະຈາຍພັນຂອອງເຫັດແດງ.
- ລະບຽບເກັບກູ້ຂອງປະຊາຊົນທີ່ວາງໄວ້ຄື: ເດືອນ 5-7.
- ຊ່ວງເລີ້ມຕົ້ນແມ່ນ ອອກເດືອນ 5 (ພຶດສະພາ) ວັນທີ່ 18-20.
- ຊ່ວງກາງແມ່ນ ເດືອນ 6 (ມິຖຸນາ) ວັນທີ່ 14-15.
- ຊ່ວງປາຍແມ່ນເດືອນ 7(ກໍລະກົດ) ວັນທີ 3-6.
- ໃຊ້ສຽມ,ໃຊ້ມີຫຼີກເອົາຄ່ອຍຂູດດິນຕາມຮາກເຫັດໄວ້ຍ່ອນເກົ່າເພື່ອຮັກສາຜົນຜະລິດ.
- ຫາໄດ້ທົ່ວທຸກປ່າທີ່ມີປ່າໄມ້ກໍ.



ຄຸນປະໂຫຍດທາງໂພຊະນາການເຫັດແດງ



# ຄຳນຳ

ເຄື່ອງປ່າຂອງດົງແມ່ນມີບົດບາດສຳຄັນສຳລັບເສດຖະກິດຊົນນະບົດໃນ ສປປລາວ ແລະ ມັນກໍໄດ້ມີການສຶກສາແລ້ວຈຳນວນໜຶ່ງ. ເປັນທີ່ຮູ້ກັນດີແລ້ວວ່າຊະນິດພັນພືດຕ່າງໆໄດ້ຕອບສະໜອງຜະລິດຕະຜົນຢ່າງກວ້າງຂວາງສຳລັບການບໍລິໂພກ ແລະ ການຜະລິດ ເຊິ່ງລວມມີ: ອາຫານທີ່ມີໂປຼຕີນຈາກພືດເຊັ່ນ: ເຫັດ ແລະ ອື່ນໆ.

ເຄື່ອງປ່າຂອງດົງແມ່ນອົງປະກອບທີ່ສຳຄັນໃນການດຳລົງຊີວິດຂອງຄົວເຮືອນໂດຍສະເພາະເປັນອາຫານສຳລັບປະຊາຊົນໃນຊົນນະບົດ, ອາຫານທີ່ຫາໄດ້ຈາກປ່າແມ່ນສຳຄັນກວ່າໝູ່ ໃນບັນດາຜົນຜະລິດ

ຊີ້ນສັດປ່າ ແລະ ປາແມ່ນແຫຼ່ງໂປຼຕີນທີ່ສຳຄັນຂອງປະຊາຊົນໄດ້ມີການປະເມີນໄວ້ວ່າ: ອາຫານຈາກປ່າແມ່ນມີການປະກອບສ່ວນ ກໍແມ່ນຍັງຂາດຄວາມເອົາໃຈໃສ່ຢ່າງພຽງພໍ.

ການສຶກສາໄດ້ພົບພໍ້ວ່າການຂາຍເຄື່ອງປ່າຂອງດົງແມ່ນມີຄຸນຄ່າສະເລ່ຍ 11%ຂອງລາຍຮັບ ແລະ ເພີ້ມຂຶ້ນເຖິງ 55% ໃນເຂດປ່າທີ່ອຸດົມສົມບູນ (ຍຸດທະສາດຊີວະນາໆພັນແຫ່ງຊາດ ເຖິງປີ 2020 ແລະ ແຜນດຳເນີນງານເຖິງປີ 2010 ໜ້າ 38-39).

# 1. ຄຸນລັກສະນະທົ່ວໄປ

- ຊື່ທ້ອງຖິ່ນ: ເຫັດແດງ
- ຊື່ອື່ນ: ຫັດນ້ຳໝາກ ຫຼື ເຫັດກໍ່ແດງ
- ຊື່ວິທະຍາສາດ: Rassula lepida.
- ວົງຕະກຸນ: MANY FAMIES.

## 1.1 ລັກສະນະພຶດສາດ

ເຫັດແດງນີ້ມີຄວາມສຳຄັນຕໍ່ເສດຖະກິດໃນ ສປປລາວ ມັນມີດອກກວ້າງ 3-10 ຊັງຕີແມັດ,ກ້ານຍາວ 295 ຊັງຕີແມັດ ແລະ ໜາ 1-2 ຊັງຕີແມັດ,ກ້ານບໍ່ມີວົງແຫວນ.ເຫັດແດງເກີດລະດູຝົນ,ມີຄວາມຕ້ອງການຂອງຕະຫຼາດສູງ ເປັນຕົ້ນແມ່ນຕະລາດຈີນ ເຊິ່ງມີລາຄາຕ່າງກັນດັ່ງນີ້ 0,3 ໂດລາ/ກິໂລ ສຳລັບເຫັດແກ່,ສຳລັບ 2,8 ໂດລາ/ກິໂລ ເຫັດອອ່ນ ແລະ ສົດ; 20-30 ໂດລາ /ກິໂລ ເຫັດແຫ້ງ ຫຼື ອົບແລ້ວ.



ລັກສະນະຂອງເຫັດແດງ



## 1.2 ການກະຈາຍພັນ

ຢູ່ເຂດພາກເໜືອເຫັດແດງມີການກະຈາຍພັນນີ້ເກີດຢູ່ໃນປ່າກໍ່ເດືອຍ,ຢູ່ພາກກາງ ແລະ ຢູ່ພາກໃຕ້ ແມ່ນເກີດຢູ່ຕາມປ່າໂຄກເຊິ່ງສາມາດພົບເຫັນໃນບັນດາແຂວງຄື: ຜົ້ງສາລີ,ຊຳເໜືອ,ຫຼວງນ້ຳທາ,ອຸດົມໄຊ,ຊຽງຂວາງ,ຄຳມ່ວນ,ສະຫວັນນະເຂດ,ສາລະວັນ,ອັດຕະປື ຈະເກີດຕາມພື້ນທີ່ຄ້ອບຊັນໃນລະດັບຄວາມສູງຈາກໜ້ານ້ຳທະເລແຕ່ 300-800 ແມັດ.

# 2. ຜົນປະໂຫຍດທາງໂພສະນາການ ແລະ ການສ້າງລາຍຮັບ

ເຫັດແດງແມ່ນຜະຕະຜົນຈາກປ່າທີ່ໃຫ້ທາດໂປຼຕີນແກ່ປະຊາຊົນໃນເຂດຊົນນະບົດ ເປັນພື້ນຖານທີ່ດີ ນອກນີ້ຍັງມີຄຸນຄ່າ ທາງດ້ານຢາພື້ນເມືອງ ສ່ວນໃຫຍ່ປະຊາຊົນເກັບກູ້ເຫັດແດງ ແລ້ວຢ້າງແຫ້ງຫຼືຂາຍດອກດິບ ເພື່ອເປັນລາຍຮັບເສີມແກ່ຄອບຄົວ.



ການກະຈາຍພັນ